**ວັນເສົາສັກສິດ**

**ຄືນສັກສິດປາສກາ**

**ວັນທີ 11 ເມສາ 2020**



**ພຣະວໍລະສານ ໂດຍນັກບຸນມັດເທວ 28, 1-10**

ຫລັງມື້ວັນເສົາພໍດີ ໃນວັນຕົ້ນອາທິດເວລາໃກ້ແຈ້ງນາງມາຣີອາມັກດາເລນາພ້ອມກັບນາງມາຣີອາຜູ້ໜຶ່ງອີກໄດ້ພາກັນໄປຢ້ຽມພະຄູຫາ. ທັນໃດນັ້ນໄດ້ເກີດແຜ່ນດິນໄຫວຢ່າງໃຫຍ່ຍ້ອນວ່າເທວະດາຂອງພະເຈົ້າອົງໜຶ່ງລົງມາຈາກສະຫວັນໄດ້ກິ້ງກ້ອນຫີນນັ້ນອອກແລະນັ່ງຢູ່ເທິງກ້ອນຫີນ. ໜ້າຕາຂອງເທວະດານັ້ນຮຸ່ງແຈ້ງຄືແສງຟ້າເຫລື້ອມເຄື່ອງນຸ່ງຂາວຄືຫິມະພວກທະຫານຍາມຕື່ນຕົກໃຈຈົນໝົດສະຕິໄປຄືຄົນຕາຍ, ເທວະດາເລີຍ ບອກພວກນັ້ນວ່າ: “ພວກນາງຢ່າຢ້ານກົວເລີຍເຮົາຮູ້ວ່າ ພວກນາງຊອກຫາພຣະເຢຊູ ຜູ້ຖືກຄຶງໃສ່ກາງເຂນ ພຣະອົງບໍ່ຢູ່ບ່ອນນີ້ດອກ ພຣະອົງໄດ້ກັບເປັນຄືນມາ ຄືໄດ້ກ່າວໄວ້ແຕ່ກ່ອນແລ້ວ. ເຊີນໄປເບິ່ງຄູຫາ ບ່ອນເຂົາຝັງພຣະອົງໄວ້. ພວກນາງຈົ່ງຮີບໄປ ບອກພວກລູກສິດຂອງພຣະອົງວ່າ ພຣະອົງໄດ້ກັບເປັນຄືນມາແລ້ວ. ເວລານີ້ພຣະອົງພວມຄອຍຖ້າພວກທ່ານຢູ່ແຂວງກາລີເລ. ພວກທ່ານຈະໄດ້ເຫັນພຣະອົງຢູ່ທີ່ນັ້ນ. ນີ້ແລ້ວຂ່າວທີ່ເຮົານຳເອົາມາແຈ້ງໃຫ້ພວກນາງຊາບ”. ພວກຜູ້ຍິງນັ້ນກໍຮີບໜີຈາກຄູຫາໄປດ້ວຍຄວາມຮູ້ສຶກຢ້ານແກມຍິນດີເປັນຢ່າງຍິ່ງ. ພວກນາງແລ່ນນຳຂ່າວໄປແຈ້ງແກ່ພວກສາວົກເວລານັ້ນພຣະເຢຊູເຈົ້າປະຈັກມາຫາພວກເຂົາກ່າວວ່າ: “ສະບາຍດີນາງທັງຫລາຍ”. ພວກນາງຫຍັບເຂົ້າມາໃກ້ຂາບລົງກອດພຣະບາດ, ນະມັດສະການພຣະອົງ. ພຣະເຢຊູເຈົ້າຈຶ່ງກ່າວກັບພວກນາງວ່າ: “ຢ່າຢ້ານເລີຍ, ຈົ່ງໄປບອກພີ່ນ້ອງຂອງເຮົາ ໃຫ້ຄືນເມືອແຂວງກາລີເລ, ຢູ່ບ່ອນນັ້ນແລ້ວພວກເຂົາຈະໄດ້ເຫັນເຮົາ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 28, 1-10**

ພີ່ນ້ອງທີ່ຮັກແພງ, ສິ່ງທີ່ພວກເຮົາເຫັນໄດ້ດ້ວຍຕາ ໃນພິທີກຳຂອງຄ່ຳຄືນວັນນີ້ຄື: ໄຟ, ທຽນປາສກາ ແລະນ້ຳ. ທັງສາມສິ່ງນີ້ພວກເຮົາລ້ວນແຕ່ໄດ້ຮັບໃນມື້ພວກເຮົາຮັບສິນລ້າງບາບ. ຍ້ອນພວກເຮົາໄດ້ເກີດໃໝ່ດ້ວຍນ້ຳແລະພຣະຈິດເຈົ້າອັນເປັນເຄື່ອງໝາຍແຫ່ງໄຟ.

**ນ້ຳ:** ເພື່ອຊຳລະລ້າງແລະເພື່ອທຳໃຫ້ພວກເຮົາມີຊີວິດ. ນອກນັ້ນ, ຍັງໝາຍເຖິງການຂ້າມຜ່ານທະເລແດງຂອງປະຊາກອນອິສຣາແອນເພື່ອອອກຈາກປະເທດເອຢິບ ພາຍໃຕ້ການນຳພາຂອງໂມແຊ. ເປັນການຂ້າມຜ່ານຈາກຂ້ອຍທາດຂອງກະສັດຟາລາໂອໄປສູ່ອິດສະລະໃນການເປັນລູກພຣະເຈົ້າ ເພື່ອຮັບໃຊ້ພຣະອົງ. ແລະກໍຍັງໝາຍເຖິງການຂ້າມຜ່ານຄວາມຕາຍໄປສູ່ຊີວິດໃໝ່.

**ໄຟ:** ເປັນສັນຍາລັກຂອງອົງພຣະຈິດເຈົ້າ, ຜູ້ເປັນພາລະກຳລັງ, ຄວາມສັດທາ ແລະຄວາມສັກສິດ. ເພາະສະນັ້ນ, ໄຟນີ້ຈະເປັນກຳລັງໃຫ້ພວກເຮົາຕໍ່ສູ້ກັບສິ່ງຫລອກລວງຕ່າງໆ. ນອກນັ້ນ, ຍັງຊ່ວຍເຜົາສູມດວງໃຈພວກເຮົາໃຫ້ມີຄວາມຮ້ອນຮົນສັດທາເພື່ອໃຫ້ພວກເຮົາກາຍເປັນຜູ້ສັກສິດເໝືອນກັບພຣະບິດາເຈົ້າສະຫວັນເປັນຜູ້ສັກສິດ.

**ທຽນປາສກາ:** ເປັນເຄື່ອງໝາຍແຫ່ງຄວາມສະຫວ່າງຂອງອົງພຣະເຢຊູກຣິສໂຕເຈົ້າຜູ້ໄດ້ກັບເປັນຄືນມາຈາກຄວາມຕາຍ ເພື່ອນຳພວກເຮົາອອກຈາກຄວາມມືດໄປສູ່ຄວາມສະຫວ່າງຂອງພຣະອົງ.

ດ້ວຍເຫດນີ້, ຄ່ຳຄືນວັນນີ້ຈຶ່ງເປັນໂອກາດໃຫ້ພວກເຮົາໄດ້ລື້ຟື້ນເຖິງຄຳສັນຍາແຫ່ງສິນລ້າງບາບຂອງພວກເຮົາແຕ່ລະຄົນ. ເພາະແມ່ນພຣະຄຸນແຫ່ງການໄຖ່ກູ້ຊຶ່ງພວກເຮົາໄດ້ຮັບໃນມື້ພວກເຮົາຮັບສິນລ້າງບາບ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ